# ຄູ່ມືຜູ້ນຳ ຫຼັກສູດ ສ.ອ.ນ. ມັດທາຍເຫຼັ້ມທີ 6

## ຄຳນຳ

ການປະຊຸມທຸກ ໆ ເທື່ອຈະປະກອບດ້ວຍ 4 ພາກສ່ວນດັ່ງຕໍ່ໄປນີ້

1. <u>ການນະມັດສະການ</u>: (10 ນາທີ)
   ໃຫ້ເລີ້ມຕົ້ນທຸກປະຊຸມດ້ວຍການນະມັດສະການອັນທີ່ປະກອບດ້ວຍຮ້ອງເພງ, ການເລົ່າຄວາມພະຍານ, ສະເໜີ ບັນຫາກ່ຽວກັບບຸກຄົນໃດບຸກຄົນໜຶ່ງ ຫຼືກ່ຽວກັບພວກຄຼິດສະຕຽນທີ່ບ້ານໃຜບ້ານລາວ ແລ້ວຕອນສຸດທ້າຍຮ່ວມອ້ອນວອນເພື່ອກັນແລະກັນແລະເພື່ອຄຼິດສະຕຽນທັງປວງ.

2. <u>ຄຳອະທິບາຍແລ້ວຮຽນຄືນ</u>: (20 ນາທີ)
   ກ. ການສອບເສັງໃນປະຊຸມ: ໃຫ້ທ່ານຕຽມຄຳຖາມຈັກ 10 ປະການທີ່ທ່ານຍົກມາຈາກບົດສອນໃນແຕ່ລະໝວດ.  ການສອບສອບເສັງໃນປະຊຸມນີ້ ສອບເສັງດ້ວຍປາກເປົ່າກໍໄດ້ ສອບເສັງດ້ວຍຂຽນເອົາກໍໄດ້ແລ້ວແຕ່ທ່ານເຫັນ ດີ.ໃຫ້ທ່ານຈັດການສອບເສັງນີ້ໄວ້ກ່ອນສິ່ງອື່ນ ໆ ເພື່ອທ່ານຈະສັງເກດສ່ວນອ່ອນແອຂອງຜູ້ມາຮຽນ. ດັ່ງນັ້ນ ທ່ານຈະສາມາດເນັ້ນໜັກສອນສ່ວນອ່ອນແອນັ້ນ.
   ຂ. ກວດການບ້ານ: ໃຫ້ທ່ານກວດເບິ່ງວ່າເຂົາໄດ້ຕອບຄຳຖາມໝົດບໍ່? ບົດຝຶກຫັດເດໄດ້ເຮັດໃສ່ພະຄຳພີຕາມທີ່ ບອກໝົດທຸກຄົນແລ້ວບໍ່?
   ຄ. ໃຫ້ທ່ານເປີດໂອກາດເພື່ອເຂົາຈະສະເໜີບັນຫາ ຫຼືຄຳຖາມທີ່ເຂົາມີມາ.
   ງ. ກວດບົດເສັງໃນຫຼັກສູດສອນ: ທ່ານອ່ານຄຳຕອບຂອງບົດເສັງໃນສຸດທ້າຍຂອງຄູ່ມືນີ້ ໃຫ້ເຂົາກວດຄຳຕອບຂອງ ໃຜຂອງລາວ. ຖ້າທ່ານສັງເກດວ່າມີດ້ານໃດທີ່ອ່ອນແອທ່ານຕ້ອງສອນຊ້ຳເລື່ອງນັ້ນກໍໄດ້.
   ຈ. ການແຈ້ງຊື່ໃນປຶ້ມບັນທຶກ: ຢ່າລືມ! ຕ້ອງເຮັດທຸກເທື່ອ.

3. <u>ການປຶກສາຫາລືແລະນຳບົດຮຽນມາໃຊ້</u>: (1 ຊົ່ວໂມງ)
   ກ. ຄຳຖາມແລະຈຸດສຳຄັນ:ໃຫ້ທ່ານເອງຕຽມໂຄງຮ່າງບອກທາງກ່ອນຈະມາຮ່ວມປະຊຸມແຕ່ລະໝວດ. ຄູ່ມືນີ້ ມີຂໍ້ສະ ເໜີເພື່ອແຕ່ລະໝວດແຕ່ຂໍ້ສະເໜີເຫຼົ່ານີ້ບໍ່ຕາຍຕົວ. ເຖິງວ່າທ່ານຈະຕຽມໂຄງຮ່າງໃດກໍຕາມແຕ່ຢ່າໜີຈາກເປົ້າໝາຍນີ້ໄປເນີ! ທ່ານຈຶ່ງຈັດໃຫ້ການນະມັດສະການເຂົ້າກັບບົດສອນອີກດ້ວຍ ແຕ່ຈົ່ງຕຽມຕົວດີ ໆ ກ່ອນປະຊຸມ.
   ຂ. ການປະຕິບັດ: ທ່ານອາດຈະສາມາດໃຊ້ວຽກລົງໄປປະຕິບັດຕົວຈິງໃຫ້ເຂົາເຮັດຕາມພອນສະຫວັນຂອງໃຜ ລາວແຕ່ໃຫ້ວຽກນັ້ນຖືກກັບບົດຮຽນໃນປະຊຸມອາທິດໜ້ານັ້ນ. ຜູ້ມາຮຽນທຸກຄົນສົມຄວນຈະຮັບພາລະຢ່າງໜຶ່ງ ຢ່າງໃດ ໃນຄຼິດສະຕະຈັກຂອງເຂົາ.

4. <u>ປິດປະຊຸມສອນ</u>: (5 ນາທີ)
   ໃຫ້ທ່ານແຕ່ງຕັ້ງວຽກການບ້ານດີໆ ແລະໃຫ້ອ່ານເປົ້າໝາຍໃນໝວດຕໍ່ໄປເພື່ອອາທິດໜ້າ. ຈຸດໃດໃນບົດຮຽນ ທີ່ອາດ ຈະຍາກໂພດໃຫ້ທ່ານພະຍາຍາມອະທິບາຍກ່ອນ.

ສຸດທ້າຍໃຫ້ປິດປະຊຸມດ້ວຍການອ້ອນວອນ.

# ການປະຊຸມເລີ້ມຕົ້ນ

1. ໃນປະຊຸມທຳອິດນີ້ ໃຫ້ທ່ານແຈກຢາຍປື້ມຮຽນແລະບອກເຂົາໄວ້ວ່າ ເຂົາຍັງຈະຕ້ອງການ:
   ກ. ພະຄຳພີ ຢ່າງນ້ອຍຕ້ອງການສະບັບປີ 1979 ເຊິ່ງມີແຕ່ 45% ຂອງພະຄຳພີເດີມ. ຖ້າຕໍ່ໄປມີເຕັມທັງ ພະຄຳພີເດີມ ແລະພະຄຳພີໃໝ່ຍິ່ງດີ.
   ຂ. ຖ້າເປັນໄປໄດ້ຢາກໃຫ້ມີສໍສີແດງ, ສີຂຽວ, ສີຟ້າ ແລະສີເຫຼືອງ. ຖ້າບໍ່ມີສີເຫຼົ່ານັ້ນເອົາສີອື່ນແທນກໍໄດ້.
2. ໃຫ້ຈົດຊື່ລົງທະບຽນຕາມລຳດັບ.
3. ໃຫ້ທ່ານທວນຄືນບົດຮຽນໃນຫຼັກສູດ ມັດທາຍ ເຫຼັ້ມທີ 5 ທີ່ຮຽນຜ່ານມາແລ້ວ ແລະໃຫ້ເບິ່ງໃນສາລະບານ ທີ່ເຂົາຈະເລີ້ມຕົ້ນຮຽນໃນຫຼັກສູດ ມັດທາຍ ເຫຼັ້ມທີ 6 ຕໍ່ໄປນີ້ໃນເລື່ອງທີ່ເຂົາຈະເລີ້ມຕົ້ນຮຽນ.
4. ຈົ່ງເຕືອນເຂົາວ່າ ທຸກຄົນທີ່ມາຮຽນສົມຄວນຈະເຂົ້າຮ່ວມໃນການປຶກສາຫາລືກັນ ບໍ່ຢາກໃຫ້ຜູ້ໃດໜ້າອາຍປາກ.

---

# ປະຊຸມທີ 1

<u>ການຕຽມຕົວຜູ້ນຳກ່ອນປະຊຸມ:</u>

ໃຫ້ທ່ານຕັດເຈ້ຍ 10 ໃບແລ້ວຂຽນຄຳປາກົດຂອງພະເຍຊູຫຼັງຈາກຄືນມາຈາກຕາຍ ໃຫ້ຂຽນເທື່ອລະໃບ, ຕາມລຳດັບນີ້: ມາລີອາໄທມັກດາລາ, ພວກຜູ້ຍິງ, ເປໂຕ, ກະໂລປາ (ກັບໝູ່), ພວກສາວົກ(ຂາດໂທມາ), ພວກສາວົກ (ທັງໂທມາ ດ້ວຍ), ສາວົກ 7 ຄົນ, 500 ກວ່າຄົນ, ຢາໂກໂບ, ທີ່ພະອົງສະເດັດຂຶ້ນສະຫວັນ.

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 1, 2, ແລະ 3.
2. ໃຫ້ວາງເຈ້ຍທີ່ຕັດ 10 ໃບ ເພື່ອໃຊ້ໃນການຮຽນຄືນເລື່ອງການປາກົດມາຂອງພະເຍຊູ ຫຼັງຈາກພະອົງຄືນພະຊົນຕາມລຳດັບ ແລ້ວໃຫ້ພິຈາລະນາແຕ່ລະເທື່ອ.
3. ຖາມເຂົາວ່າ ການຄືນພະຊົນຂອງພະອົງຍັງສຳຄັນໃນການປະກາດພະທຳທຸກວັນນີ້ຢ່າງໃດ? ຖາມເຂົາອີກວ່າເຂົາຈະຍົກເລື່ອງການຄືນພະຊົນແລ້ວປາກົດມາຢ່າງໃດໃນເມື່ອຈະເທດສະໜາ ຫຼືສອນພະທຳ.
4. ຖ້າຄົນມາກ່າວຫາວ່າ ມີຄົນລັກສົບຂອງພະອົງຈາກອຸບໂມງໄປ ເຂົາຈະຕອບຢ່າງໃດ? (ເລື່ອງສາມຈຳພວກ ທີ່ມີເຫດຜົນ ຢາກລັກສົບຂອງພະອົງໄປ).
5. ຖາມເຂົາວ່າ ມີສາດສະໜາໃດທີ່ບໍ່ເຊື່ອວ່າພະເຍຊູຄືນມາຈາກຕາຍ? ຖ້າຄົນທີ່ບໍ່ເຊື່ອຢ່າງນັ້ນຈະປະຕິເສດວ່າ ພະອົງບໍ່ໄດ້ ຄືນມາ ເຮົາຄວນຕອບຢ່າງໃດ?

6. ຜູ້ທີ່ມາຮຽນນັ້ນຈະຄິດອອກຫຼັກຖານອື່ນ ໆ ເລື່ອງການຄືນພະຊົນບໍ່?
7. ໃຫ້ເຂົາອ່ານ 1 ໂກລິນໂທ15:14-20 ທີ່ອາຈານໂປໂລຕອບຄົນທີ່ບໍ່ເຊື່ອໃນການຄືນພະຊົນ.ໃຫ້ແລກປ່ຽນ ຄວາມຄິດເຫັນກັນ ໃນເລື່ອງນັ້ນ. ຖ້າມີຄົນທີ່ເຊື່ອວ່າພະເຢຊູຄືນມາເປັນແຕ່ວິນຍານ ບໍ່ແມ່ນຮ່າງກາຍ ເຮົາຄວນຕອບຢ່າງໃດ?
8. ມີຈຳພວກໃດແດ່ທີ່ປ່ຽນທ່າທີຫຼາຍຫຼັງຈາກການຄືນພະຊົນ? ທີ່ເຂົາປ່ຽນທ່າທີຢ່າງນັ້ນເປັນຫຼັກຖານຢ່າງໃດກ່ຽວກັບການຄືນ ພະຊົນ? ໃຫ້ຜູ້ທີ່ມາຮຽນນັ້ນກ່າວຄຳພະຍານເລື່ອງທ່າທີຂອງເຂົາກ່ອນທີ່ບໍ່ໄດ້ເຊື່ອແລະທີຫຼັງເຂົາມາ ເຊື່ອໃນພະເຢຊູ.
9. ໃຫ້ແລກປ່ຽນຄວາມຄິດເຫັນໃນຮູບສີ່ແຈສາກຢູ່ໜ້າສຸດທ້າຍຂອງບົດທີ 2 (ໜ້າ 25)

---

# ປະຊຸມທີ 2

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 4 ແລະ 5
2. ໃຫ້ເຂົາບັນລະຍາຍວ່າ ຫຼັງຈາກພະເຢຊູຄືນມາຈາກຕາຍພະກາຍຂອງພະອົງເປັນຢ່າງໃດ?
3. ການຄືນພະຊົນຂອງພະເຢຊູມີສ່ວນກ່ຽວຂ້ອງກັບອະນາຄົດຂອງຄຼິດສະຕຽນເຮົາໃນທຳນອງໃດ? ເມື່ອພະເຢຊູສະເດັດມາ ເທື່ອທີສອງຄຼິດສະຕຽນທີ່ຕາຍໄປແລ້ວຈະຄືນມາໂດຍມີລັກສະນະຢ່າງໃດ?
4. ທີ່ພະເຢຊູສະເດັດສູ່ສະຫວັນຄຼິດສະຕຽນເຮົາຈະໄດ້ຮັບຜົນສຳຄັນຢ່າງໃດ? ຜົນເຫຼົ່ານັ້ນຈະຊ່ວຍໃຫ້ເຮົາດຳເນີນຊີວິດຄຼິດສະຕຽນໄດ້ຢ່າງໃດ?
5. ໃຫ້ເຂົາອ່ານ ກຈກ 1:9-11 ອ່ານແລ້ວໃຫ້ປິດພະຄຳພີແລ້ວກ່າວເລື່ອງການນັ້ນໂດຍບໍ່ອ່ານຈາກພະຄຳພີ. ເປັນ ຫຍັງພະເຢຊູຈຳເປັນຕ້ອງຂຶ້ນສະຫວັນ?
6. ໃຫ້ເຂົາອ່ານເບິ່ງຈຸດທີ່ພິມເປັນຕົວອັກສອນເນີ້ງ ກ່ອນຄຳຖາມ 4/40 ໜ້າ 41. ຖ້າຄົນໃດເຂົ້າໃຈຜິດຕາມທີ່ຂີດໜ້າ (—) 4 ປະການນັ້ນ ເຂົາຈະສາມາດຍົກຂໍ້ພະຄຳພີຕອບບໍ່? (ເຂົາອາດຈະຕ້ອງໃຊ້ເວລາຊອກຫາຂໍ້ພະຄຳພີເຫຼົ່ານັ້ນ)
7. ໃຫ້ຄົນໜຶ່ງອ່ານ ເອເຢໂຊ 1:20-22. ທີ່ພະເຢຊູປະທັບເບື້ອງຂວາຂອງພະບິດາໃຫ້ບັງເກີດຜົນຢ່າງໃດໃນຊີວິດຂອງຄຼິດສະ ຕຽນມາເຖິງທຸກວັນນີ້? ການນັ້ນເປັນຫຼັກຖານວ່າ ພະເຈົ້າຄວບຄຸມທັງຈັກກະວານຢ່າງໃດ?
8. ໃຫ້ເຂົາກ່າວເລື່ອງເຫດການສຳຄັນ 4 ປະການໃນ 52 ວັນທີ່ເລີ້ມຕົ້ນກັບການ ສິ້ນພະຊົນ. ລາຍງານໃນ ພະຄຳພີບົດໃດ? ມີ ຈັກມື້ຜ່ານໄປລະຫວ່າງແຕ່ລະເຫດການ?
9. ໃຫ້ອ່ານ ເອເຢໂຊ 4:7-10 ອີກແລ້ວປຶກສາຫາລືກັນເລື່ອງຕອນພະຄຳພີນັ້ນ. (ກັບໄປເບິ່ງຄຳຖາມ 23/3 - 5 ໃນເຫຼັ້ມ ທີ 5 ກໍໄດ້)

# ປະຊຸມທີ 3

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 6 ແລະ 7
2. ໃຫ້ເຂົາຊອກຫາ 3 ຂອບເຂດທີ່ປ່າວປະກາດເລີ້ມຈາກ ກຈກ 1:1, ກຈກ 8:1 ແລະ ກຈກ 13:1. ໃຫ້ບອກຊື່ແຕ່ລະຂອບເຂດແລະບອກເຫດການສຳຄັນໃນແຕ່ລະສ່ວນນັ້ນ.
3. ໃຫ້ຊີ້ບອກຜູ້ລາຍງານພະທຳກິດຈະການ ແລ້ວຍົກສະເໜີຫຼັກຖານຈາກພະຄຳພີໃນເລື່ອງນີ້.
4. ໃຈຄວາມສຳຄັນໃນພະທຳກິດຈະການຢູ່ກັບບົດແລະຂໍ້ໃດ? ໃຫ້ເຂົາບອກສັບສຳຄັນໃນພະທຳກິດຈະການທີ່ ຍົກມາຈາກຂໍ້ ນັ້ນແລະສາມຂອບເຂດທີ່ຈະປະກາດຂ່າວປະເສີດ.
5. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນ ຕາມໃນຮູບສີ່ແຈສາກລະຫວ່າງຄຳຖາມ 6/42 ແລະ 6/43. ທ່ານຄວນທີ່ຈະຕອບຢ່າງໃດໃນເມື່ອເຂົາຍ້ອງຍໍທີ່ທ່ານເທດສະໜາ ຫຼືສອນໄດ້ດີຫຼາຍ.
6. ໃຫ້ເຂົາຍົກຫຼັກຖານຈາກພະຄຳພີວ່າ ພະວິນຍານບໍລິສຸດເປັນຕົວຈິງຄືເປັນບຸກຄະລິກພາບ. ສ່ວນບາງຄົນ ທີ່ເຂົ້າໃຈຜິດເລື່ອງ ພະວິນຍານ ເຂົາເຂົ້າໃຈຜິດຢ່າງໃດ? ຈະຕອບເຂົາຢ່າງໃດ?
7. ໃຫ້ຍົກສິ່ງທີ່ມະນຸດເຮົາທຳຜິດຕໍ່ພະວິນຍານໄດ້ (ຄຳຖາມ 7/16) ໃຫ້ຜູ້ທີ່ມາຮຽນຢຸດພັກຄາວໜຶ່ງເພື່ອສັງເກດເບິ່ງວ່າເຂົາກະທຳຜິດ ຕໍ່ພະວິນຍານຢ່າງນັ້ນບໍ່ ຖ້າເຄີຍໃຫ້ສາລະພາບຕໍ່ພະເຈົ້າແລ້ວຂໍໃຫ້ພະເຈົ້າຍົກໂທດໃຫ້.
8. ໃຫ້ເຂົາຍົກສະເໜີສັນຍາລັກຂອງພະວິນຍານ 4 ປະການ (ຄຳຖາມ 7/23) ແລ້ວອະທິບາຍຄວາມໝາຍສະເພາະ ຂອງສັນຍາ ລັກແຕ່ລະປະການ. ແຕ່ລະປະການນັ້ນຈະມີຜົນຮັບໃນຊີວິດຂອງເຮົາຢ່າງໃດ?
9. ຕັ້ງແຕ່ເຂົາຮູ້ເລື່ອງພະວິນຍານບໍລິສຸດໃນພະທຳກິດຈະການ ເຂົາຄວນດຳເນີນຊີວິດຢ່າງໃດ? (ທ່ານຈົ່ງເນັ້ນໃຫ້ເຂົາອ້ອນວອນຂໍໃຫ້ເຕັມໄປດ້ວຍພະວິນຍານຢູ່ສະເໝີ.)

# ປະຊຸມທີ 4

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 8 ແລະ 9
2. ລາຊະກິດຂອງພະວິນຍານຕໍ່ຄົນທີ່ບໍ່ໄວ້ວາງໃຈໃນພະເຢຊູມີສອງປະການ. ໃຫ້ເຂົາບອກແຕ່ລະປະການ ແລະ ຂໍ້ພະຄຳພີທີ່ ເປັນຫຼັກຖານປະການນັ້ນດ້ວຍ.

3. ຕາມທີ່ທ່ານໄດ້ຮຽນມາໃນບົດນີ້ ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນແລະກັນເລື່ອງລາຊະກິດຂອງ ພະວິນຍານ ບໍລິສຸດ. ໃນ ວັນເວລາທີ່ເຮົາໄວ້ວາງໃຈໃນພະເຍຊູ ລາຊະກິດໃນການສ້າງຄວາມສຳພັນ ລະຫວ່າງ ເຮົາກັບພະເຈົ້າແລະໃນການດັດແປງອຸປະນິໄສໃໝ່.ການຂອງພະວິນຍານບໍລິສຸດຈະ ປາກົດຂຶ້ນຢ່າງໃດ?
4. ຄຳວ່າ "ເຕັມໄປໂດຍພະວິນຍານ" ໝາຍຄວາມວ່າຢ່າງໃດ? ໃຫ້ຍົກຂໍ້ພະຄຳພີມາເປັນຫຼັກ.
5. ຖ້າມີຄົນມາຖາມຜູ້ທີ່ຮຽນນັ້ນວ່າ "ຂ້າພະເຈົ້າຈະຕ້ອງເຮັດຫຍັງຈຶ່ງຈະເຕັມໄປໂດຍພະວິນຍານ?" ເຂົາຈະຕອບຢ່າງໃດ?
6. ຖ້າຈະໃຫ້ການຂອງພະວິນຍານຍິ່ງຫຼາຍຂຶ້ນໃນຊີວິດຂອງເຮົາຈະເຮັດຢ່າງໃດ?
7. ຖ້າເຫັນຄົນໃດທີ່ມັກເປັນພະຍານເລື່ອງປະສົບການກັບພະວິນຍານໃນອາດີດ ແຕ່ບໍ່ຊອກຫາພະວິນ ຍານຕໍ່ໄປອີກ ຄວນຕອບ ຄົນນັ້ນຢ່າງໃດ?
8. ໃນ ອຟຊ 4:26-31ການໃດຈະເຮັດໃຫ້ພະວິນຍານເສຍພະໄທ?ມີຫຍັງອີກທີ່ຈະຂັດຂວາງ ພະວິນຍານບໍ່?
9. ໃຫ້ເຂົາປຶກສາຫາລືກັນວ່າ ຄົນທີ່ເຕັມໄປໂດຍພະວິນຍານບໍລິສຸດຈະມີລັກສະນະໃດ? (ອ່ານ 1 ກລທ 3:16-17, 1 ກລທ 6:19-20 ແລະ 2 ກລທ 6:16)

---

# ປະຊຸມທີ 5

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 10, 11, ແລະ 12.
2. ໃຫ້ຮຽນຄືນເລື່ອງສິນມະຫາສະໜິດທີ່ຮຽນມາໃນເຫຼັ້ມທີ 5 ໃຫ້ແລກປ່ຽນຄວາມຄິດເຫັນກັນແລະກັນ ເລື່ອງຄວາມໝາຍຂອງ ສິນບັບຕິສະມາ. ໃຫ້ສັງເກດວ່າສິນທັງສອງນັ້ນມີສ່ວນຄ້າຍຄືກັນຢ່າງໃດ? ແຕກຕ່າງກັນຢ່າງໃດ?
3. ໃຫ້ພິຈາລະນາວ່າສິນບັບຕິສະມາເປັນສິ່ງທີ່ຈຳເປັນເຖິງຂະໜາດໃດ? ແລະຄວນຮັບໃນຍຸກໃດ? ໃຫ້ ເຂົາສະເໜີວ່າສິນບັບຕິສະມາສະແດງເຖິງເຫດການ 4 ປະການໃດ?
4. ໃຫ້ປຶກສາຫາລືກັນກ່ຽວກັບເລື່ອງຕົວອັກສອນເນີ້ງໃນທ້າຍສຸດຂອງບົດທີ 10 (ໜ້າ 101)
5. ຖ້າຜູ້ໃຫຍ່ຮັບເຊື່ອໃນພະເຍຊູ ຄວນຮັບສິນທັນທີ ຫຼືລໍຖ້າກ່ອນ? ຄວນຜ່ານການຮຽນສຳລັບຄຼິດສະ ຕຽນໃໝ່ ກ່ອນບໍ່? ຄວນ ທົດລອງຊີວິດກ່ອນບໍ່? ພວກສາວົກປະຕິບັດຢ່າງໃດໃນເລື່ອງນີ້?
6. ຖ້າພໍ່ແມ່ຈະຖະຫວາຍເດັກນ້ອຍຄວນຈະມີການຮັບສິນທີ່ປຽບເໝືອນພິທີຕັດໃນສະໄໝພະຄຳພີເດີມ ບໍ່? (ມີບາງ ຄຼິດສະຕະຈັກທີ່ເອົານ້ຳທາຫົວເດັກນ້ອຍທີ່ເກີດໃໝ່ ຖືວ່າເປັນສິນບັບຕິສະມາເປັນຫຼັກ ຖານວ່າເກີດໃນຄອບຄົວຄຼິດສະຕຽນ).

7. ໃຫ້ທ່ານກວດເບິ່ງວ່າ ເຂົາໝາຍຄຳເທດສະໜາຂອງເປໂຕໃນພະທຳກິດຈະການ 5 ບ່ອນ. ໃຫ້ພິຈາລະນາເລື່ອງສະພາບ ແລະສະຖານະການໃນແຕ່ລະເທື່ອທີ່ເປໂຕເທດສະໜາ.
8. ຕາມໃນ ກຈກ 2:38 ພວກຄຼິດສະຕຽນຈະໄດ້ຮັບພະພອນຈາກພະເຢຊູສອງປະການໃດ, ມີເງື່ອນໄຂໃດກ່ອນ?
9. ໃຫ້ແລກປ່ຽນຄວາມຄິດເຫັນກ່ຽວກັບຄຳຕອບໃນຄຳຖາມ 11/42, 11/44, 11/46, 12/34 ຄ. ແລະ 12/37.
10. ໃຫ້ພິຈາລະນາເລື່ອງການອັດສະຈັນຕ່າງ ໆ ໃນພະຄຳພີໃໝ່ວ່າມີຈຸດປະສົງຢ່າງໃດ? ໝາຍສຳຄັນ ແລະການອັດສະຈັນສະ ແດງຫຍັງ? (3 ປະການ). ໃຫ້ເຂົາຍົກສະເໜີສອງເທື່ອທີ່ພະອົງບໍ່ໄດ້ກະທຳການອັດສະຈັນ. ເປັນຫຍັງພະອົງບໍ່ກະທຳ? ຖ້າພົບຄົນທີ່ບໍ່ເຊື່ອໃນການອັດສະຈັນຈັກເທື່ອ ຈະຕອບເຂົາຢ່າງໃດ? ຖ້າເຊື່ອວ່າໃນສະໄໝພະຄຳພີ ມີຢູ່ແທ້ ແຕ່ໃນສະໄໝນີ້ບໍ່ມີແລ້ວ ຈະຕອບຢ່າງໃດ?

---

# ປະຊຸມທີ 6

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 13, 14, ແລະ 15.
2. ໃຫ້ເຂົາບັນລະຍາຍສະພາບຄຼິດສະຕຽນໃນສະໄໝພວກສາວົກທີ່ຖືກຂົ່ມເຫງຫຼາຍ. ພວກຄືດສະຕຽນໃນສະໄໝນັ້ນຈະເປັນ ຕົວຢ່າງຕໍ່ພວກເຮົາຢ່າງໃດ? ຖ້າຄຼິດສະຕຽນໃນສະໄໝນີ້ຖືກຂົ່ມເຫງຄວນຈະກະທຳຕອບຢ່າງໃດ?ຄວນຫຼີກເວັ້ນຢ່າງໃດ?
3. ໃຫ້ເປີດແລກປ່ຽຄວາມຄິດເຫັນກ່ຽວກັບຄຳຖາມ 13/47 ແລະ 14/39.
4. ເປັນຫຍັງຄຼິດສະຕະຈັກທີ່ຖືກຂົ່ມເຫງຢ່າງນັ້ນຍັງຈະເລີນກ້າວໜ້າໄດ້? ເປັນຫຍັງຄຼິດສະຕຽນທີ່ຢູ່ສະບາຍໂພດອາດຈະອ່ອນກຳລັງໄປ?
5. ໃຫ້ເຂົາຍົກຕອນພະຄຳພີ ອະທິບາຍເລື່ອງລະບຽບແລະການຕັດສິນພາຍໃນຄຼິດສະຕະຈັກ. ໃຫ້ເຂົາຍົກຕົວຢ່າງການຕັດສິນ ສອງຢ່າງທີ່ເຫັນໃນພະຄຳພີ. ມີສາເຫດໃດທີ່ເຂົາຈະຕັດສິນຄົນໃນສະໄໝພະຄຳພີ? ເຂົາລົງໂທດ ຢ່າງໃດ? ແມ່ນພວກໃດທີ່ມີສິດລົງໂທດ. ຖ້າຈະລົງໂທດສິມຄວນມີທ່າທີຢ່າງໃດ?
6. ຖ້າຈະລົງການຕັດສິນຄວນເປີດເຜີຍບໍ່? ຄວນຫຼີກເວັ້ນຫຍັງ? ຄວນມີຈຸດໝາຍປາຍທາງຢ່າງໃດ?
7. ຖ້າຄຼິດສະຕະຈັກໃດບໍ່ມີການຕັດສິນມາແຕ່ຫຼາຍຟ້າຫຼາຍປີແລ້ວຕໍ່ໄປເລີ້ມຕົ້ນຕັດສິນ ອາດຈະເກີດມີບັນຫາຢ່າງໃດ? ຖ້າບໍ່ ມີການຕັດສິນຈັກເທື່ອຈະກາຍເປັນຢ່າງໃດ?
8. ໃຫ້ເຂົາແລກປ່ຽນຄວາມຄິດເຫັນກັນແລະກັນເລື່ອງຄວາມບາບໃນພວກຄຼິດສະຕຽນ. ກິດຈະການບົດທີ 6 ເປັນຕົວຢ່າງຢ່າງ ໃດໃນການແກ້ບັນຫາໃນຄຼິດສະຕະຈັກ?

9. ພາລະຂອງຜູ້ປົກຄອງກັບພວກຜູ້ນຳໃນຄຼິດສະຕະຈັກແຕກຕ່າງກັນຢ່າງໃດ? ມີເງື່ອນໄຂໃດກ່ອນຈະເປັນ ຜູ້ປົກຄອງ?

10. ໃຫ້ປຶກສາຫາລືກັນກ່ຽວກັບຄຳຕອບໃນຄຳຖາມ 15/23 ຂ. ໃຫ້ຮ່ວມພິຈາລະນາເລື່ອງໃນຮູບສີ່ຫຼ່ຽມ ໜ້າ 141.

---

# ປະຊຸມທີ 7

<u>ຈົ່ງຕຽມຕົວກ່ອນປະຊຸມ:</u>

ໃຫ້ຕັດເຈ້ຍ 6 ໃບຕາມຕາຕະລາງເລື່ອງປະຫວັດໃນສະໄໝພະຄຳພີເດີມ. ໃຫ້ຂຽນຍຸກສະໄໝຢູ່ຂ້າງໜ້າແລ້ວຂຽນ ຄົນສຳຄັນ ປີໃດ ສະຖານທີ່ ແລະຊື່ພະທຳໃນພະຄຳພີເດີມຢູ່ຂ້າງຫຼັງ.

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງ 16, 17, ແລະ 18.
2. ໃຫ້ແລກປ່ຽນຄວາມຄິດເຫັນກ່ຽວກັບຄຳຕອບ 18/13 ງ. ແລະ 18/17.
3. ໃຫ້ຍົກປຶກສາຫາລືກັນທີ່ຊະເຕຟາໂນກ່າວແກ້ຕົວໃນ ກິດຈະການ ບົດທີ 7. ເຂົາກ່າວຫາຊະເຕຟາໂນບໍ່ຈິງສອງປະການ ໃດ? ຊະເຕຟາໂນຕອບເຂົາຢ່າງໃດ?
4. ຄຳຕອບຂອງຊະເຕຟາໂນກັບຄຳຕອບຂອງພະເຢຊູມີສ່ວນຄ້າຍຄືກັນຢ່າງໃດ? ພວກເຮົາຄວນເອົາຊະເຕຟາໂນ ກັບພະເຢຊູເປັນຕົວຢ່າງສຳລັບເຮົາຢ່າງໃດ? ຈະມີຄົນມາກ່າວຫາເຮົາຢ່າງບໍ່ຈິງບໍ່? ພວກຄຼິດສະຕຽນເຫັນຊະເຕຟາໂນຕາຍແລ້ວມີຜົນຮັບຢ່າງໃດ?
5. ໃຫ້ເອົາເຈ້ຍ 6 ໃບທີ່ຕັດແລ້ວມາໃຊ້ເພື່ອຮຽນຄືນເລື່ອງປະຫວັດໃນພະຄຳພີເດີມ. ໃຫ້ຮຽນເລື່ອງຄົນສຳຄັນເລື່ອງປີ ສະຖານ ທີ່ ແລະ ພະທຳທີ່ກ່າວເລື່ອງນັ້ນ.
6. ໃຫ້ພິຈາລະນາເລື່ອງເປົ້າໝາຍປາຍທາງທີ່ພະເຈົ້າຈັດໄວ້ເພື່ອຊາດຢິວ.
   (ອ່ານ ປຖກ 3:15 ປຖກ 12:2-3 ແລະ ລູກາ 1:68-73.)
7. ໃນການຂະຫຍາຍຄຼິດສະຕະຈັກໃນ ກຈກ 1-7 ມີເຫດການໃດທີ່ສຳຄັນ? ບຸກຄົນໃດກໍ່ສຳຄັນ?
8. ມີບາງຄົນທີ່ອາດຈະສະແຫວງຫາອຳນາດຂອງພະວິນຍານບໍລິສຸດເພື່ອໄດ້ປະໂຫຍດສ່ວນຕົວ. (ໃຫ້ເຂົາຍົກຕົວຢ່າງ) ຄວນທີ່ຈະສະແຫວງຫາໂດຍສາເຫດໃດທີ່ຖືກຕ້ອງ?
9. ໃຫ້ເຂົາອະທິບາຍເລື່ອງຫຼັກການ 9 ປະການໃນການປະກາດພະທຳຕໍ່ບຸກຄົນ.
   (ຕາມແບບຂອງຟີລິບ)
10. ໃຫ້ຜູ້ມາຮຽນນັ້ນ ບັນທຶກປະສົບການຂອງເຂົາໃນການເປັນພະຍານ. ໃຫ້ກ່າວເລື່ອງທັງຄວາມຍາກ ແລະ ຄວາມດີດ້ວຍ.

11. ໃຫ້ເຂົາເປີດອ່ານໂຢຮັນ ບົດ 4 ແລ້ວຊີ້ບອກຫຼັກການ 9 ປະການໃນເລື່ອງນັ້ນ.

12. ໃຫ້ເຂົາຍົກສະເໜີວິທີທາງທີ່ຄຼິດສະຕະຈັກຂອງເຂົາຈະກາຍເປັນສະຖານທີ່ປ່າວປະກາດໄດ້.

---

# ປະຊຸມທີ 8

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງທີ 19 ແລະ 20.
2. ໃຫ້ເຂົາບັນລະຍາຍເລື່ອງທີ່ໂຊໂລຫຼີບຕັ້ງໃຈໃໝ່ແລ້ວຫາບົດແລະຂໍ້ໃນພະຄຳພີທີ່ບັນທຶກໄວ້ 3 ບ່ອນອື່ນໂຊໂລ ຫຼີບຕັ້ງໃຈໃໝ່ ຄົນອື່ນ ໆ ມີສ່ວນໃດໃນການນັ້ນ? ຝ່າຍພະເຈົ້າມີສ່ວນໃດ?
3. ພະເຈົ້າຈັດຕຽມອານານາເນຍໄວ້ເພື່ອເຮັດຫຍັງ?
4. ໃຫ້ຜູ້ທີ່ມາຮຽນນັ້ນສະແດງບົດບາດວ່າເປັນຄົນທີ່ເຊື່ອໃໝ່ແລະໃຫ້ອີກຄົນໜຶ່ງສະແດງໃຫ້ເປັນຜູ້ປຶກສາ.ໃຫ້ຜູ້ປຶກສານັ້ນອະທິ ບາຍສິ່ງທີ່ຄຼິດສະຕຽນໃໝ່ນັ້ນຄວນຮູ້ (ຕາມໃນບົດຮຽນທີ 19) ໃຫ້ອະທິບາຍເລື່ອງຈຸດໝາຍ ປາຍທາງສຳລັບຄົນທີ່ຮັບເຊື່ອ ໃໝ່. (ກຈກ 9:17-18)
5. ຖ້າມີຄົນມາຮັບເຊື່ອໃໝ່ ເຮົາຈະຊ່ວຍເຂົາໄດ້ຢ່າງໃດ? ຄວນເຕືອນເຂົາຢ່າງໃດ?
6. ພວກຊາດຢິວເຄີຍຫ້າມຫຍັງ?ເຂົາຖືວ່າຄົນຕ່າງຊາດເປັນຢ່າງໃດ?ເປໂຕເຄີຍຖືຢ່າງນັ້ນແຕ່ກ່ອນບໍ່? ຫຼັງຈາກເພິ່ນເຫັນການນິມິດ ໃນກິດຈະການ ບົດທີ 10 ເພິ່ນປ່ຽນທ່າທີຢ່າງໃດ?
7. ໃນທຸກວັນນີ້ ຍັງມີຄວາມລຳອຽງຢ່າງໃດໃນຄຼິດສະຕະຈັກ? ເປໂຕສອນຢ່າງໃດໃນ ກຈກ ບົດທີ 10 ກ່ຽວກັບຄວາມລຳອຽງ ນັ້ນ? ຖ້າຄຼິດສະຕຽນຢູ່ໃກ້ກັບຄົນທີ່ຖືຊາດ ຫຼື ຖືຕຳແໜ່ງຄວນຕອບວ່າຢ່າງໃດ?
8. ໃນ ກຈກ 10:24, 27, ແລະ 33 ໂກເນລີໂອເປັນຕົວຢ່າງຕໍ່ເຮົາຢ່າງໃດ?
9. ໃນ ກຈກ 10:1-2 ເຫັນວ່າໂກເນລີໂອເປັນຄົນອຸປະນິໄສໃດ? ແຕ່ ໃນ ກຈກ 10:43 ເຫັນວ່າເພິ່ນຍັງຕ້ອງຮັບຄວາມຍົກຜິດບາບບໍ່?
10. ໃຫ້ແຕ່ລະຄົນອ່ານຄຳຕອບ 20/15 ໃຫ້ໝູ່ຟັງ.

---

# ປະຊຸມທີ 9

<u>ໃນການປະຊຸມ:</u>

1. ໃຫ້ກວດບົດເສັງທີ 21 ແລະ 22.
2. ໃຫ້ທ່ານຍົກແຜນທີ່ຕ່າງ ໆ ທີ່ເຂົາເຄີຍສຶກສາມາໃນເຫຼັ້ມທີ 6 ນີ້ ທວນຄືນ.

3. ໃຫ້ເຂົາພິຈາລະນາກ່ຽວກັບບາລະນາບາວ່າ ເປັນລູກສິດຂອງພະອົງຢ່າງໃດ?ໃຫ້ເຂົາຍົກສະເໜີໂອກາດທີ່ບາລະນາບາໜຸນ ໃຈຄົນທີ່ຮັບເຊື່ອໃໝ່ໃນພະທຳກິດຈະການ (ຢ່າງນ້ອຍ 4 ເທື່ອ). ທີ່ບາລະນາບາໃຫ້ ຄົນ ທີ່ເຊື່ອໃໝ່ມີກຳລັງໃຈປານນັ້ນ ມີຜົນ ຮັບຢ່າງໃດໃນຄຼິດສະຕະຈັກ? ທີ່ບາລະນາບາເສຍສະລະຕົວເອງເພື່ອຄົນອື່ນນັ້ນ ກໍຈະມີການທົດລອງພ້ອມບໍ່?
4. ພວກເຮົາທຸກວັນນີ້ຈະເອົາຕົວຢ່າງຂອງບາລະນາບາຢ່າງໃດ? ໃຫ້ຜູ້ທີ່ມາຮຽນນັ້ນສະເໜີຊື່ຄຼິດສະຕຽນໃໝ່ທີ່ຕ້ອງການ ມີໝູ່ເພື່ອນຄຼິດສະຕຽນທີ່ອາດຈະຂາດປະສົບການ ຫຼືອາດຈະຕ້ອງການຄວາມໜຸນໃຈຢ່າງອື່ນ ໆ. ໃຫ້ຜູ້ມາຮຽນນັ້ນຍົກຕົວຢ່າງຄົນທີ່ໜຸນໃຈເຂົາເວລາຍັງເປັນຄຼິດສະຕຽນໃໝ່ ໆ.
5. ຖ້າມີຄົນໃດທີ່ຢາກເຂົ້າຮ່ວມກັບທີ່ປະຊຸມເຂົາອາດຈະເກງໃຈຢ່າງໃດ? ເຮົາຈະຊ່ວຍເຂົາໄດ້ຢ່າງໃດ?
6. ເປັນຫຍັງພວກທີ່ເຄີຍເປັນຜູ້ນຳໃນຄຼິດສະຕະຈັກບໍ່ຢາກມອບສິດໄວ້ກັບຄົນທີ່ເຂົ້າມາໃໝ່. ເຂົາຄວນເປີດໂອກາດໃຫ້ຄົນໃໝ່ ເຖິງຂະໜາດໃດ?
7. ຖ້າມີພີ່ນ້ອງທີ່ລົ້ມລົງໄປເທື່ອໜຶ່ງ ເຮົາຄວນເປີດໂອກາດໃໝ່ເຖິງຂະໜາດໃດ?
(ເຊັ່ນ ໂຢຮັນມາລະໂກ)
8. ຖ້າເຫັນຄົນທີ່ມີໂອກາດຮັບໃຊ້ພະເຈົ້າຫຼາຍເທື່ອ ແຕ່ຍັງລົ້ມລົງຫຼາຍເທື່ອ ຈະມີໃຜທີ່ມີສິດອອກສຽງວ່າບໍ່ຕ້ອງເປີດໂອກາດອີກເພາະໝົດຫວັງແລ້ວ.
9. ໃຫ້ເອົາປະສົບການຂອງໂປໂລ ບາລະນາບາ ແລະ ໂຢຮັນມາລະໂກເປັນຕົວຢ່າງໃຫ້ແກ່ເຮົາ.

# ປະຊຸມທີ 10

ໃນການປະຊຸມ:

1. ໃຫ້ທ່ານກວດເບິ່ງວ່າເຂົາຕອບຄຳຖາມໃນ ບົດທີ 23, 24 ແລະ 25 ໝົດ ຫຼື ບໍ່.
2. ໃຫ້ແຕ່ລະຄົນອ່ານຄຳຕອບ 23/5 ໃຫ້ໝູ່ຟັງ.
3. ໃຫ້ເຂົາສະເໜີພະທຳຈາກພະຄຳພີໃໝ່ທີ່ຈະເໝາະສົມໃນການວິໄຈຈາກແງ່ຄວາມຄິດ ຫຼືຫຼັກການແຍກສ່ວນ ດັ່ງຕໍ່ໄປນີ້: ຕາມຫຼັກໂອວາດ ຕາມຊີວະປະຫວັດບຸກຄົນ ຕາມຫົວເລື່ອງ
4. ຖ້າເຮົາວິໄຈພະທຳໃດຕາມແຕ່ລະສ່ວນແຍກ ຕໍ່ໄປເຮົາຊອກຫາເຫດການທີ່ຕ້ອງຫາໄດ້ງ່າຍກວ່າແຕ່ກ່ອນ. ໃຫ້ທ່ານຜູ້ນຳສະ ເໜີເລື່ອງຕ່າງ ໆ (ບໍ່ຕ້ອງບອກບົດແລະຂໍ້) ແລ້ວໃຫ້ເຂົາຊອກເອົາເອງ.
5. ໃຫ້ເຂົາອະທິບາຍວ່າຫົວເລື່ອງໃຫຍ່ກັບຫົວເລື່ອງສຳຮອງຕ່າງກັນຢ່າງໃດ?
6. ໃຫ້ເຂົາຍົກຕົວຢ່າງ ຫົວເລື່ອງທີ່ຍາວໂພດ ຫຼືທີ່ບໍ່ແຈ້ງດີ.
7. ໃຫ້ເຂົາສະເໜີຊື່ຫົວເລື່ອງທີ່ເຂົາແຕ່ງໄວ້ສຳລັບສາມສ່ວນໃນພະທຳກິດຈະການໃຫ້ໝູ່ຟັງ.
8. ໃຫ້ລົງມືວິໄຈພະທຳຟີລິບປອຍຕາມວິທີທີ່ສອນມາໃນບົດທີ 23 ເຖິງ 25 ນີ້. ກ່ອນອື່ນຕ້ອງອ່ານໃຫ້ໝົດຈຶ່ງຈະເລືອກຫຼັກ ການແຍກ.

# ປະຊຸມທວນຄືນ

<u>ຈົ່ງສັງເກດ:</u>

ມາເຖິງປະຊຸມນີ້ທ່ານອາດຈະເລືອກໄດ້ວ່າ ຈະຕຽມປະຊຸມນີ້ໄວ້ສະເພາະເພື່ອການທວນຄືນທັງໝົດຫຼັກສູດ ມັດທາຍ ເຫຼັ້ມທີ 6 ນີ້ບໍ່ ຫຼື ຈະຈັດໃຫ້ມີການສອບເສັງສຸດທ້າຍທັນທີແລ້ວແຕ່ທ່ານຈະເລືອກ. ພວກທີ່ມາຮຽນພ້ອມທີ່ຈະສອບເສັງບໍ່ ຫຼື ຕ້ອງການຮຽນຄືນອີກ?

ຖ້າຈະທວນຄືນມີຫຼາຍວິທີທີ່ຈະເລືອກໄດ້ຄື:

1. ໃຫ້ເອົາເປົ້າໝາຍໃນແຕ່ລະໝວດມາເປັນພື້ນຖານ.
2. ໃຫ້ເອົາຄຳຖາມໃນບົດເສັງແຕ່ລະບົດມາຖາມເຂົາ.
3. ເອົາຄຳຖາມໃນເປົ້າໝາຍ ເອົາແຕ່ບົດໃດທີ່ເຂົາຮູ້ສຶກວ່າອ່ອນ ໃຫ້ເຂົາຕອບຈາກບົດເສັງ.

ທ່ານຈົ່ງບອກໃຫ້ເຂົາເຂົ້າໃຈວ່າ ບົດເສັງສຸດທ້າຍນັ້ນຈະຂຶ້ນຢູ່ກັບເປົ້າໝາຍໃນແຕ່ລະໝວດເປັນຕົ້ນ.